ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງສາລະວັນ

ເລກທີ...717...../ຈຂ.ສວ

ສາລະວັນ, ວັນທີ 15.9.2023

# ຂໍ້ຕົກລົງ

## ວ່າດ້ວຍ ການຄຸ້ມຄອງຂໍ້ມູນຂ່າວສານຜ່ານອິນເຕີເນັດ ຢູ່ແຂວງສາລະວັນ

- ອີງຕາມ ກົດໝາຍວ່າດ້ວຍ ການປົກຄອງທ້ອງຖິ່ນ ເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015.
- ອີງຕາມ ກົດໝາຍວ່າດ້ວຍ ການຕ້ານ ແລະ ສະກັດກັ້ນອາຊະຍາກຳທາງລະບົບຄອມພິວເຕີ ສະບັບເລກທີ 61/ສພຊ, ລົງວັນທີ 15 ກໍລະກົດ 2015.
- ອີງຕາມ ດຳລັດວ່າດ້ວຍ ການຄຸ້ມຄອງຂໍ້ມູນຂ່າວສານຜ່ານອິນເຕີເນັດ ສະບັບເລກທີ 327/ລບ, ລົງວັນທີ 16 ກັນຍາ 2014.
- ອີງຕາມ ໜັງສືສະເໜີ ຂອງພະແນກເຕັກໂນໂລຊີ ແລະ ການສື່ສານ ແຂວງສາລະວັນ ສະບັບເລກທີ 349/ພຕສ.ສວ, ລົງວັນທີ 30 ສິງຫາ 2023.

### ເຈົ້າແຂວງສາລະວັນ ຕົກລົງ:

### ໝວດທີ 1
### ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ, ມາດຕະການໃນການຄຸ້ມຄອງຂໍ້ມູນຂ່າວສານຜ່ານອິນເຕີເນັດ ພາຍໃນແຂວງສາລະວັນ ເພື່ອຮັບປະກັນຄວາມໝັ້ນຄົງ, ຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍ ຂອງຊາດ ແລະ ຂອງແຂວງ ແນ່ໃສ່ປົກປ້ອງຊື່ສຽງ, ກຽດສັກສີ ແລະ ຜົນປະໂຫຍດອັນຊອບທຳ ຂອງຜູ້ໃຫ້ບໍລິການ, ຜູ້ໃຊ້ບໍລິການ ແລະ ສັງຄົມ ທົ່ວແຂວງສາລະວັນ ທັງເປັນກຳລັງແຮງໃນການປະກອບສ່ວນເຂົ້າໃນພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ, ກໍຄືແຂວງສາລະວັນ.

**ມາດຕາ 2 ການຄຸ້ມຄອງຂໍ້ມູນຂ່າວສານຜ່ານອິນເຕີເນັດ**

ການຄຸ້ມຄອງຂໍ້ມູນຂ່າວສານຜ່ານອິນເຕີເນັດ ແມ່ນການຕິດຕາມ, ກວດກາການເຄື່ອນໄຫວ, ຕ້ານ ແລະ ສະກັດກັ້ນ ການນຳໃຊ້ຂໍ້ມູນຂ່າວສານຜ່ານອິນເຕີເນັດ ທີ່ມີພຶດຕິກຳເປັນໄພຕໍ່ສັງຄົມ ແລະ ຄວາມໝັ້ນຄົງຂອງຊາດ, ກໍຄືແຂວງສາລະວັນ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍດັ່ງນີ້.



สแกนด้วย CamScanner

1. ຂໍ້ມູນຂ່າວສານ ໝາຍເຖິງຂໍ້ຄວາມທີ່ເປັນຕົວເລກ, ຕົວອັກສອນ, ຮູບພາບເໜັງຕີງ, ຮູບພາບບໍ່ເໜັງຕີງ, ສຽງວີດີໂອ ແລະ ອື່ນໆ.

2. ອິນເຕີເນັດ (Internet) ໝາຍເຖິງ ເຄືອຂ່າຍຄອມພິວເຕີທີ່ມີຂະໜາດໃຫຍ່ ມີການເຊື່ອມຕໍ່ລະຫວ່າງເຄືອຂ່າຍຫຼາຍໆເຄືອຂ່າຍທົ່ວໂລກ ໂດຍໃຊ້ພາສາທີ່ໃຊ້ສື່ສານກັນລະຫວ່າງຄອມພິວເຕີທີ່ເອີ້ນວ່າ (Protocol) ຜູ້ໃຊ້ເຄືອຂ່າຍນີ້ ສາມາດສື່ສານກັນໄດ້ໃນຫຼາຍໆທາງເຊັ່ນ: ອີເມລ, ເວັບບອດ ແລະ ສາມາດສືບຄົ້ນຂໍ້ມູນ ແລະ ຂ່າວສານຕ່າງໆ ລວມທັງດຶດລອກແຟ້ມຂໍ້ມູນ ແລະ ໂປຣແກຣມມາໃຊ້ໄດ້.

3. ສື່ສັງຄົມ (Social media) ໝາຍເຖິງຮູບແບບການສື່ສານ ແລະ ການເຜີຍແຜ່ຂໍ້ມູນຂ່າວສານ ຜ່ານອິນເຕີເນັດຊຶ່ງບຸກຄົນທົ່ວໄປສາມາດນຳສະເໜີ, ສົ່ງ, ຮັບ, ສົ່ງຕໍ່, ມີຄຳເຫັນ ຕໍ່ເນື້ອໃນຂໍ້ມູນຂ່າວສານ ເຊັ່ນ: ເຟສບຸກ, ທະວິດເຕີ ຢູທູບ ແລະ ອື່ນໆ.

4. ໜ້າເວັບ (Web page) ໝາຍເຖິງ ກະດານຂ່າວເອເລັກໂຕຣນິກ ທີ່ນຳສະເໜີໃນຮູບພາບສັນຍາລັກ, ຕົວເລກ, ຕົວໜັງສື, ຮູບພາບເໜັງຕີງ, ຮູບພາບບໍ່ເໜັງຕີງ, ວີດີໂອ, ສຽງ ແລະ ຮູບແບບອື່ນໆ ຜ່ານອິນເຕີເນັດ.

5. ເວັບໄຊ (Website) ໝາຍເຖິງ ລະບົບຂໍ້ມູນຂ່າວສານທີ່ສ້າງຂຶ້ນເປັນໜ້າເວັບໜຶ່ງ ຫຼື ຫຼາຍໜ້າເວັບ.

6.ທະບຽນສ່ວນຕົວໃນສື່ສັງຄົມ ໝາຍເຖິງ ໜ້າເວັບທີ່ສ້າງຂຶ້ນໂດຍຜ່ານສື່ສັງຄົມຊຶ່ງຜູ້ລົງທະບຽນ ຫຼື ອົງການຈັດຕັ້ງເປັນເຈົ້າຂອງໜ້າເວັບນັ້ນແລະເປັນຜູ້ຄຸ້ມຄອງເນື້ອໃນຂໍ້ມູນຂ່າວສານເອງຕົວຢ່າງ: www.facebook.com/salavan.

7. ຜູ້ໃຫ້ບໍລິການອິນເຕີເນັດ ໝາຍເຖິງ ຜູ້ໃຫ້ບໍລິການເຊື່ອມຕໍ່ອິນເຕີເນັດໃຫ້ແກ່ຜູ້ໃຊ້ບໍລິການ ສາມາດເຊື່ອມຕໍ່ເຂົ້າຫາອິນເຕີເນັດ.

8. ຜູ້ໃຊ້ອິນເຕີເນັດ ໝາຍເຖິງ ບຸກຄົນທີ່ເຊື່ອມຕໍ່ເຂົ້າຫາອິນເຕີເນັດ ໃນຮູບແບບຕ່າງໆ ເພື່ອອ່ານ, ຂຽນ, ສົ່ງຕໍ່ ຂໍ້ມູນຂ່າວສານຜ່ານອິນເຕີເນັດ.

9. ຜູ້ຄຸ້ມຄອງ ເວັບໄຊ ໝາຍເຖິງ ຜູ້ມີສິດເຂົ້າໃນລະບົບຢ່າງຖືກຕ້ອງ ເພື່ອສ້າງ, ດັດແກ້, ປັບປຸງ ແລະ ລຶບລະບົບເຕັກນິກ ແລະ ເນື້ອໃນຂອງເວັບໄຊ.

10. ຄວາມປອດໄພ ໃນການນຳໃຊ້ຂໍ້ມູນຂ່າວສານ ໝາຍເຖິງ ການຮັກສາຂໍ້ມູນຂ່າວສານ ແລະ ລະບົບຂໍ້ມູນຂ່າວສານ ໃຫ້ປາສະຈາກ ການຖືກເຊື່ອມຕໍ່, ການນຳໃຊ້, ການທຳລາຍ ແລະ ການປອມແປງທີ່ຜິດກົດໝາຍ.

**ມາດຕາ 4 ນະໂຍບາຍຂອງລັດ ກ່ຽວກັບການຄຸ້ມຄອງຂໍ້ມູນຂ່າວສານຜ່ານອິນເຕີເນັດ**

ລັດສົ່ງເສີມ, ຊຸກຍູ້ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ ທີ່ດຳລົງຊີວິດ ແລະ ເຄື່ອນໄຫວວຽກງານຢູ່ ສປປ ລາວ ນຳໃຊ້ຂໍ້ມູນຂ່າວສານຜ່ານອິນເຕີເນັດ ເຂົ້າໃນການເຄື່ອນໄຫວທາງດ້ານເສດຖະກິດ-ສັງຄົມ ໂດຍສະເພາະໃນຂະແໜງການສຶກສາ, ສາທາລະນະສຸກ, ການຄົ້ນຄວ້າວິໄຈທາງວິທະຍາສາດ, ເຕັກໂນໂລຊີ ເພື່ອເພີ່ມປະສິດທິພາບ, ຄຸນນະພາບໃນການຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນ.

ລັດສົ່ງເສີມ ແລະ ສ້າງເງື່ອນໄຂໃຫ້ນຳໃຊ້ ລະຫັດຊື່ອິນເຕີເນັດ ແຫ່ງຊາດລາວ (.LA) ຢ່າງກວ້າງຂວາງ ພ້ອມທັງຫັນໄປສູ່ການນຳໃຊ້ເຕັກໂນໂລຊີເລກໝາຍອິນເຕີເນັດຍຸກໃໝ່ (IPV6), ສ້າງໂປຣແກຣມເປັນພາສາລາວ, ສ້າງເວັບໄຊ ແລະ ເຄືອຂ່າຍສັງຄົມອອນລາຍ ທີ່ເຄື່ອນໄຫວຖືກຕ້ອງ ຕາມລະບຽບກົດໝາຍຂອງ ສປປ ລາວ.

**ມາດຕາ 5 ຫຼັກການກ່ຽວກັບ ການຄຸ້ມຄອງຂໍ້ມູນຂ່າວສານຜ່ານອິນເຕີເນັດ**

ໃນວຽກງານການຄຸ້ມຄອງຂໍ້ມູນຂ່າວສານຜ່ານອິນເຕີເນັດ ຕ້ອງຮັບປະກັນຫຼັກການ ດັ່ງນີ້:

1. ຄວາມສອດຄ່ອງກັບ ແນວທາງນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ແຜນພັດທະນາເສດຖະກິດ-ສັງຄົມຂອງຊາດ, ກໍຄືຂອງແຂວງສາລະວັນ.

2. ຄວາມໝັ້ນຄົງຂອງຊາດ, ຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ, ວັດທະນະທຳ ແລະ ຮີດຄອງປະເພນີອັນດີງາມຂອງຊາດ;

3. ຮັກສາຄວາມລັບຂອງຊາດ, ຄວາມລັບຂອງລັດຖະການ, ຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ;

4. ຄວາມເປັນເອກະພາບ, ປອດໄພ, ສະດວກ, ວ່ອງໄວ ແລະ ຍຸຕິທຳ;

สแกนด้วย CamScanner

5. ການປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງຜູ້ໃຫ້ບໍລິການ, ຜູ້ໃຊ້ບໍລິການຂໍ້ມູນຂ່າວສານຜ່ານອິນເຕີເນັດ ຕາມກົດໝາຍ ແລະ ລະບຽບການ;

**ມາດຕາ 6 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງຂອງລັດ ແລະ ເອກະຊົນ ທັງພາຍໃນ ຫຼື ຕ່າງປະເທດ ທີ່ໃຫ້ບໍລິການ ແລະ ໃຊ້ບໍລິການອິນເຕີເນັດ ທົ່ວແຂວງສາລະວັນ.

## ໝວດທີ 2
## ການເຜີຍແຜ່ ຂໍ້ມູນຂ່າວສານ ຜ່ານອິນເຕີເນັດ

**ມາດຕາ 7 ການເຜີຍແຜ່ ຂໍ້ມູນຂ່າວສານ ຜ່ານອິນເຕີເນັດ**

ການເຜີຍແຜ່ຂໍ້ມູນຂ່າວສານຜ່ານອິນເຕີເນັດ ແມ່ນການນຳເອົາຂໍ້ຄວາມ, ຕັດຕໍ່ເນື້ອໃນຮູບ, ຮູບພາບໜັງຕິງ, ສຽງ, ວີດີໂອ ເຂົ້າສູ່ໜ້າເວັບໄຊ ຫຼື ໂປຼແກຼມສື່ສັງຄົມອອນລາຍ ເພື່ອສະເໜີ, ມີຄຳເຫັນ, ແລກປ່ຽນ, ສົ່ງ ແລະ ສົ່ງຕໍ່ໃຫ້ແກ່ຄົນໜຶ່ງ ຫຼື ຫຼາຍຄົນ.

**ມາດຕາ 8 ລະບຽບການ ເຜີຍແຜ່ຂໍ້ມູນຂ່າວສານ ຜ່ານອິນເຕີເນັດ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງຂອງລັດ ທັງພາຍໃນ ແລະ ຕ່າງປະເທດ ສາມາດເຜີຍແຜ່ຂໍ້ມູນຂ່າວສານຜ່ານອິນເຕີເນັດໄດ້ ແຕ່ຕ້ອງລະບຸແຫຼ່ງທີ່ມາຂອງຂໍ້ມູນຂ່າວສານຢ່າງຈະແຈ້ງ ແລະ ຖືກຕ້ອງ.

ຜູ້ຄຸ້ມຄອງເວັບໄຊ ແລະ ເຈົ້າຂອງທະບຽນສ່ວນຕົວໃນສັງຄົມອອນລາຍ ຕ້ອງກວດກາເນື້ອໃນຂໍ້ມູນຂ່າວສານກ່ອນຈະເຜີຍແຜ່ໃນໜ້າເວັບໄຊຂອງຕົນ.

ຂໍ້ມູນຂ່າວສານ ທີ່ບໍ່ຜ່ານສື່ທາງການ ຫຼື ສຳນັກງານ ທີ່ຖືກຕ້ອງຕາມລະບຽບກົດໝາຍ ແມ່ນບໍ່ສາມາດ ໃຊ້ທາງການໄດ້.

ເຈົ້າຂອງ ຫຼື ຜູ້ຄຸ້ມຄອງເວັບໄຊ ຕ້ອງມີຄວາມຮັບຜິດຊອບໃນການກວດກາເນື້ອໃນ, ຂໍ້ມູນຂ່າວສານ ຢ່າງລະອຽດ ກ່ອນຈະອະນຸຍາດໃຫ້ຜູ້ອື່ນເຜີຍແຜ່ຜ່ານເວັບໄຊຂອງຕົນ.

## ໝວດທີ 3
## ເນື້ອໃນຂໍ້ມູນຂ່າວສານ ທີ່ເຜີຍແຜ່ຜ່ານອິນເຕີເນັດ

**ມາດຕາ 9 ເນື້ອໃນຂໍ້ມູນຂ່າວສານ ທີ່ອະນຸຍາດໃຫ້ເຜີຍແຜ່ ຜ່ານອິນເຕີເນັດ**

ເນື້ອໃນຂໍ້ມູນຂ່າວສານ ທີ່ໄດ້ຮັບອະນຸຍາດເຜີຍແຜ່ຜ່ານອິນເຕີເນັດ ແມ່ນເນື້ອໃນທີ່ມີລັກສະນະສ້າງສັນ, ໃຫ້ຄວາມຮູ້ ເປັນປະໂຫຍດທາງດ້ານເສດຖະກິດ ແລະ ສັງຄົມ.

**ມາດຕາ 10 ເນື້ອໃນຂໍ້ມູນຂ່າວສານ ທີ່ບໍ່ອະນຸຍາດໃຫ້ເຜີຍແຜ່ຜ່ານອິນເຕີເນັດ**

ເນື້ອໃນທີ່ບໍ່ອະນຸຍາດໃຫ້ເຜີຍແຜ່ຜ່ານອິນເຕີເນັດ ມີດັ່ງນີ້:

1. ຂໍ້ມູນຂ່າວສານທີ່ມີລັກສະນະຕົວະຍົວະ, ຫຼອກລວງ ແລະ ຊວນເຊື່ອປະຊາຊົນບັນດາເຜົ່າ ທີ່ຢູ່ພາຍໃນ ແລະ ຕ່າງປະເທດ ທີ່ມີລັກສະນະຕໍ່ຕ້ານພັກປະຊາຊົນ ປະຕິວັດລາວ, ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຫຼື ມ້າງເພສັນຕິພາບ, ຄວາມເປັນເອກະລາດ, ອຳນາດອະທິປະໄຕຄວາມໝັ້ນຄົງ ແລະ ຄວາມວັດທະນະທຳອອນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.

2. ຍຸຍົງ ແລະ ສົ່ງເສີມ ການເຄື່ອນໄຫວທີ່ເປັນການກໍ່ການຮ້າຍ, ຄາດຕະກຳ ແລະ ສ້າງຄວາມປັ່ນປ່ວນຕໍ່ສັງຄົມ.

3. ໂຄສະນາບິດເບືອນ ແລະ ປ່າວຂ່າວອະກຸສົນ ເພື່ອສ້າງຄວາມແບ່ງແຍກລະຫວ່າງຊົນເຜົ່າ ແລະ ສາສະໜາ ແລະ ລະຫວ່າງຊາດ.

4. ໂຄສະນາຂາຍຢາເສບຕິດ, ອາວຸດເສິກ, ອາວຸດເຄມີ, ວັດຖຸລະເບີດ (ທາດເບື່ອ), ການຄ້າມະນຸດ, ຄ້າປະເວນີ ແລະ ສິ່ງຜິດກົດໝາຍ.



สแกนด้วย CamScanner

5. ເຜີຍແຜ່ ຮູບພາບລາມົກ, ຮູບພາບຕັດຕໍ່, ຮູບພາບເໜັງຕີງ, ບໍ່ເໜັງຕີງ, ສຽງ ແລະ ວິດີໂອ ທີ່ ກົດໝາຍສາ ທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເກືອດຫ້າມ ຫຼື ແຕະຕ້ອງເຖິງຮີດຄອງປະເພນີອັນດີງາມຂອງຊາດ, ຂອງເຜົ່າ ແລະ ສິດສ່ວນບຸກຄົນ.

6. ເຜີຍແຜ່ຄວາມລັບຂອງພັກ-ຂອງຊາດ ແລະ ຂອງສອງກຳລັງປະກອບອາວຸດ ຫຼື ຄວາມລັບດ້ານອື່ນໆທີ່ກຳນົດໄວ້ໃນລະບຽບສະເພາະຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.

7. ເຜີຍແຜ່ຂໍ້ມູນຂ່າວສານທີ່ບໍ່ຖືກຕ້ອງ ແລະ ບິດເບືອນຄວາມຈິງ ເພື່ອຈຸດປະສົງສ້າງຄວາມເສື່ອມເສຍ ຕໍ່ຊື່ສຽງ, ກຽດສັກສີ ຫຼື ສິດທິສ່ວນບຸກຄົນ, ພາກສ່ວນ, ສະຖາບັນ ຫຼື ອົງການຈັດຕັ້ງອື່ນໆ.

8. ນຳໃຊ້ສະຖານທີ່ຂອງບຸກຄົນ ຫຼື ການຈັດຕັ້ງ, ຮູບ, ຮູບພາບເໜັງຕີງ, ສຽງ, ວິດີໂອ, ລາຍເຊັນ, ລະຫັດຕ່າງໆບັດສິນເຊື່ອທະນາຄານ ຫຼື ເອກະສານສ່ວນຕົວຂອງບຸກຄົນອື່ນ ເພື່ອພົນປະໂຫຍດ ຫຼື ເພື່ອຈຸດປະສົງອື່ນ ໂດຍບໍ່ໄດ້ຮັບອະນຸຍາດ ຈາກຜູ້ເປັນເຈົ້າຂອງ.

## ໝວດທີ 4

## ຄະນະກຳມະການ ຄຸ້ມຄອງຂໍ້ມູນຂ່າວສານຜ່ານອິນເຕີເນັດ ແລະ ແບບແຜນວິທີເຮັດວຽກ

### ມາດຕາ 11 ຄະນະກຳມະການ ຄຸ້ມຄອງຂໍ້ມູນຂ່າວສານຜ່ານອິນເຕີເນັດ

ຄະນະກຳມະການຄຸ້ມຄອງຂໍ້ມູນຂ່າວສານຜ່ານອິນເຕີເນັດແຂວງສາລະວັນ ມີກົງຈັກຊ່ວຍວຽກແບບບໍ່ປະຈຳການ ໂດຍຖືເອົາພະແນກເຕັກໂນໂລຊີ ແລະ ການສື່ສານແຂວງສາລະວັນ ເປັນກອງເລຂາ, ຄະນະກຳມະການຄຸ້ມຄອງຂໍ້ມູນຂ່າວສານຜ່ານອິນເຕີເນັດ ແຂວງສາລະວັນ ມີໂຄງປະກອບບຸກຄະລາກອນ ດັ່ງນີ້:

1. ທ່ານ ຮອງເຈົ້າແຂວງສາລະວັນ (ຜູ້ຮັບຜິດຊອບວຽກງານເສດຖະກິດ) ເປັນປະທານ ຊີ້ນຳລວມ
2 ທ່ານ ຫົວໜ້າພະແນກເຕັກໂນໂລຊີ ແລະ ການສື່ສານ ເປັນຮອງປະທານ ຜູ້ຊີ້ນຳລົງເລິກ
3. ທ່ານ ຮອງຫົວໜ້າພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເປັນຮອງປະທານ
4. ທ່ານ ຮອງຫົວໜ້າກອງບັນຊາການປ້ອງກັນຄວາມສະຫງົບແຂວງ ເປັນກຳມະການ
5. ທ່ານ ຮອງຫົວໜ້າກອງບັນຊາການທະຫານແຂວງ ເປັນກຳມະການ
6. ທ່ານ ຮອງຫົວໜ້າພະແນກສຶກສາທິການ ແລະ ກິລາແຂວງ ເປັນກຳມະການ
7. ທ່ານ ຮອງຫົວໜ້າພະແນກການຕ່າງປະເທດແຂວງ ເປັນກຳມະການ
8. ທ່ານ ຜູ້ອຳນວຍການບໍລິສັດລາວໂທລະຄົມມະນາຄົມ ສາຂາແຂວງ ສາລະວັນ ເປັນກຳມະການ
9. ທ່ານ ຜູ້ອຳນວຍການບໍລິສັດ ອີທີແອລ ຈຳກັດສາຂາແຂວງ ສາລະວັນ ເປັນກຳມະການ
10. ທ່ານ ຜູ້ອຳນວຍການບໍລິສັດ ສະຕາໂທລະຄົມ ສາຂາແຂວງ ສາລະວັນ ເປັນກຳມະການ
11. ທ່ານ ຜູ້ອຳນວຍການ ບໍລິສັດເບດເທເລຄອມ ເປັນກຳມະການ
12. ຫົວໜ້າຫ້ອງການເຕັກໂນໂລຊີ ແລະ ການສື່ສານ 8 ເມືອງ ເປັນກຳມະການ
13. ທ່ານ ຮອງຫົວໜ້າພະແນກເຕັກໂນໂລຊີ ແລະ ການສື່ສານ ເປັນຫົວໜ້າ ກອງເລຂາ

### ມາດຕາ 12 ແບບແຜນວິທີເຮັດວຽກ

ຄະນະກຳມະການຄຸ້ມຄອງຂໍ້ມູນຂ່າວສານ ຜ່ານອິນເຕີເນັດແຂວງ ສາລະວັນ ມີແບບແຜນວິທີເຮັດວຽກ ດັ່ງນີ້:

1. ປະຕິບັດຫຼັກການລວມສູນປະຊາທິປະໄຕ ແລະ ຕົກລົງເປັນໝູ່ຄະນະ ກ່ຽວກັບວຽກງານຂອງຄະນະກຳມະ ການຄຸ້ມຄອງຂໍ້ມູນຂ່າວສານຜ່ານອິນເຕີເນັດ ແຂວງສາລະວັນ.

2. ແບ່ງງານໃຫ້ບຸກຄົນຮັບຜິດຊອບຈະແຈ້ງ ແລະ ເສີມຂະຫຍາຍ ຫົວຄິດປະດິດສ້າງ ຂອງສະມາຊິກໃນຄະນະກຳມະການຄຸ້ມຄອງຂໍ້ມູນຂ່າວສານຜ່ານອິນເຕີເນັດ ແຂວງສາລະວັນ.

3. ເຮັດວຽກມີແຜນການ, ແຜນງານ ແລະ ໂຄງການລະອຽດ ແກ້ໄຂວຽກງານຢ່າງມີຈຸດສຸມ ແລະ ມີເປົ້າໝາຍ



สแกนด้วย CamScanner

ໃນແຕ່ລະໄລຍະ ຖືເອົາລະບອບປະຊຸມປະຈຳເດືອນ, 03 ເດືອນ, 06 ເດືອນ, ປີ ແລະ ກອງປະຊຸມວິຊາການ ເພື່ອເປັນການສະຫຼຸບຖອດຖອນບົດຮຽນ ແລະ ວາງທິດທາງແຜນການເຄື່ອນໄຫວໃນຕໍ່ໜ້າ.

- ໃນກໍລະນີຈຳເປັນ ແລະ ຮີບດ່ວນ ສາມາດເປີດກອງປະຊຸມສະໄໝວິສາມັນຂອງຄະນະຂຶ້ນໄດ້ ແຕ່ຕ້ອງມີສະ ມາຊິກຢ່າງໜ້ອຍ ສອງສ່ວນສາມຂອງຄະນະກຳມະການດັ່ງກ່າວເຂົ້າຮ່ວມ ຄົ້ນຄວ້າປຶກສາຫາລືວຽກທີ່ຈຳເປັນ, ເຫດ ການສຸກເສີນຈາກສັງຄົມ.

4. ປະຕິບັດການພົວພັນປະສານງານພາຍໃນ ແລະ ພາຍນອກ ໃຫ້ສອດຄ່ອງ ຕາມສະພາບຄວາມເປັນຈິງ.

## ໝວດທີ 5
## ໜ້າທີ່ ແລະ ຄວາມຮັບຜິດຊອບ ໃນການຄຸ້ມຄອງຂໍ້ມູນຂ່າວສານຜ່ານອິນເຕີເນັດ

### ມາດຕາ 13 ໜ້າທີ່ຂອງຜູ້ໃຫ້ບໍລິການອິນເຕີເນັດ

ຜູ້ໃຫ້ບໍລິການອິນເຕີເນັດ ມີ ໜ້າທີ່ ດັ່ງນີ້:

1. ລະງັບການເຂົ້າເຖິງຂໍ້ມູນຂ່າວສານ, ປິດການເຊື່ອມຕໍ່ຊົ່ວຄາວ ຫຼື ຍາວນານຕໍ່ຜູ້ໃຊ້ບໍລິການທີ່ລະເມີດ ຂໍ້ຕົກລົງສະບັບນີ້ ແລະ ລະບຽບກົດໝາຍອື່ນທີ່ກ່ຽວຂ້ອງ ຕາມຄຳສັ່ງຂອງອົງການຄຸ້ມຄອງ.

2. ໃຫ້ຄວາມຮ່ວມມື ແລະ ສະໜອງຂໍ້ມູນທີ່ຖືກຕ້ອງ ແລະ ຊັດເຈນ ໃຫ້ແກ່ອົງການຈັດຕັ້ງທີ່ກ່ຽວຂ້ອງ.

3. ປະຕິບັດຕາມມາດຕະຖານການເຊື່ອມຕໍ່ ທີ່ອົງການຈັດຕັ້ງກ່ຽວຂ້ອງກຳນົດອອກ.

4. ປະຕິບັດໜ້າທີ່ອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນລະບຽບ, ກົດໝາຍ.

### ມາດຕາ 14 ໜ້າທີ່ຂອງຜູ້ໃຊ້ບໍລິການອິນເຕີເນັດ

ຜູ້ໃຊ້ບໍລິການອິນເຕີເນັດ ຫຼື ເຈົ້າຂອງທະບຽນສ່ວນຕົວໃນສື່ສັງຄົມອອນລາຍ ມີ ໜ້າທີ່ ດັ່ງນີ້:

1. ຮັບຜິດຊອບຕໍ່ໜ້າກົດໝາຍ, ຕໍ່ເນື້ອໃນຂໍ້ມູນຂ່າວສານທີ່ຕົນນຳສະເໜີ, ແລກປ່ຽນ, ສົ່ງ ແລະ ສົ່ງຕໍ່ຜ່ານເວັບໄຊ, ສື່ສັງຄົມອອນລາຍ ຫຼື ຮູບການອື່ນຜ່ານອິນເຕີເນັດ.

2. ຮັບປະກັນຄວາມປອດໄພ ຂອງຂໍ້ມູນຂ່າວສານສ່ວນຕົວຂອງຕົນ.

3. ປະຕິບັດໜ້າທີ່ອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນບຽບກົດໝາຍ.

### ມາດຕາ 15 ໜ້າທີ່ຂອງຜູ້ຄຸ້ມຄອງເວັບໄຊ

ໜ້າທີ່ຂອງຜູ້ຄຸ້ມຄອງເວັບໄຊ ມີດັ່ງນີ້:

1. ຮັບຜິດຊອບຕໍ່ໜ້າກົດໝາຍ ຕໍ່ເນື້ອໃນຂໍ້ມູນຂ່າວສານ ຜ່ານເວັບໄຊທີ່ຕົນຄຸ້ມຄອງ.

2. ກວດກາເນື້ອໃນຂໍ້ມູນຂ່າວສານ ກ່ອນເຜີຍແຜ່ໃນໜ້າເວັບທີ່ຕົນຄຸ້ມຄອງ.

3. ລະງັບການເຜີຍແຜ່ເນື້ອໃນ ຂໍ້ມູນຂ່າວສານ ຂອງສະມາຊິກໃນເວັບໄຊຂອງຕົນ ທີ່ລະເມີດຕໍ່ຂໍ້ຕົກລົງສະບັບນີ້ ແລະ ລະບຽບກົດໝາຍອື່ນໆທີ່ກ່ຽວຂ້ອງ.

4. ປະຕິບັດໜ້າທີ່ອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

### ມາດຕາ 16 ຄວາມຮັບຜິດຊອບຂອງຂະແໜງການທີ່ກ່ຽວຂ້ອງ

1. ພະແນກເຕັກໂນໂລຊີ ແລະ ການສື່ສານ ແຂວງສາລະວັນ ຮັບຜິດຊອບ ດັ່ງນີ້:

1.1. ໂຄສະນາ ແລະ ເຜີຍແຜ່ນະໂຍບາຍ, ແຜນຍຸດທະສາດ ແລະ ລະບຽບກົດໝາຍກ່ຽວກັບການຄຸ້ມຄອງຂໍ້ມູນຂ່າວສານຜ່ານອິນເຕີເນັດ.

1.2. ຕິດຕາມ, ກວດກາ, ການບໍລິການຂອງຜູ້ໃຫ້ບໍລິການອິນເຕີເນັດ ແລະ ການເຜີຍແຜ່ຂໍ້ມູນຂ່າວສານ ຂອງຜູ້ໃຊ້ບໍລິການອິນເຕີເນັດ.

1.3. ອອກຄຳສັ່ງໃຫ້ບັນດາຜູ້ໃຫ້ບໍລິການອິນເຕີເນັດ, ລະງັບການເຂົ້າເຖິງຂໍ້ມູນຂ່າວສານ, ຕັດການເຊື່ອມຕໍ່ຊົ່ວຄາວ ຫຼື ຍາວນານ ຕໍ່ຜູ້ໃຊ້ບໍລິການທີ່ລະເມີດຂໍ້ຕົກລົງສະບັບນີ້ ແລະ ລະບຽບກົດໝາຍອື່ນທີ່ກ່ຽວຂ້ອງ.



สแกนด้วย CamScanner

1.4. ຮັບ ແລະ ພິຈາລະນາການສະເໜີຂອງຜູ້ໃຫ້ບໍລິການ, ຜູ້ໃຊ້ບໍລິການອິນເຕີເນັດ ແລະ ສັງຄົມທົ່ວໄປ ກ່ຽວກັບການເຜີຍແຜ່ຂໍ້ມູນຂ່າວສານຜ່ານອິນເຕີເນັດ.

1.5. ໃຫ້ການຮ່ວມມືກັບເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ຕິດຕາມຊອກຫາຜູ້ເຜີຍແຜ່ຂໍ້ມູນຂ່າວສານ ທີ່ເປັນການລະເມີດຂໍ້ຕົກລົງສະບັບນີ້ ຫຼື ລະບຽບກົດໝາຍອື່ນທີ່ກ່ຽວຂ້ອງ.

1.6. ສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ ໃຫ້ຂັ້ນເທິງຢ່າງເປັນປົກກະຕິ.

2. ພະແນກຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ ແຂວງສາລະວັນ ຮັບຜິດຊອບດັ່ງນີ້:

2.1. ຕິດຕາມ, ກວດກາ, ໄຈ້ແຍກ ແລະ ວິເຄາະເນື້ອໃນຂໍ້ມູນຂ່າວສານຜ່ານອິນເຕີເນັດຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ.

2.2. ຄົ້ນຄວ້າ, ຖະແຫຼງ ແລະ ເຜີຍແຜ່ຂ່າວສານຢ່າງເປັນທາງການ ເພື່ອຊີ້ແຈງກ່ຽວກັບຂໍ້ມູນຂ່າວສານ ທີ່ບໍ່ຖືກຕ້ອງ.

2.3. ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ເພື່ອແຈ້ງແຫຼ່ງຂໍ້ມູນຂ່າວສານ ທີ່ກະທົບຕໍ່ຄວາມໝັ້ນຄົງຂອງຊາດ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ.

2.4. ສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ ໃຫ້ຂັ້ນເທິງຢ່າງເປັນປົກກະຕິ.

3. ກອງບັນຊາການປ້ອງກັນຄວາມສະຫງົບ ແຂວງສາລະວັນ ຮັບຜິດຊອບ ດັ່ງນີ້:

3.1. ຮັບແຈ້ງຄວາມຈາກບຸກຄົນ, ນິຕິບຸກຄົນ ແລະ ອົງການຈັດຕັ້ງ ໃນກໍລະນີມີການກະທໍາຜິດທີ່ພົວພັນເຖິງຄວາມໝັ້ນຄົງຂອງຊາດ ແລະ ຄວາມບໍ່ເປັນລະບຽບຮຽບຮ້ອຍຂອງສັງຄົມ.

3.2. ເກັບກໍາ, ກວດກາ ແລະ ຄົ້ນຄວ້າວິໄຈ ຂໍ້ມູນຂ່າວສານ ຜ່ານອິນເຕີເນັດ ທີ່ມີລັກສະນະຄຸກຄາມເຖິງຄວາມໝັ້ນຄົງຂອງຊາດ, ຄວາມລັບຂອງຊາດ ແລະ ຄວາມບໍ່ສະຫງົບຂອງສັງຄົມ.

3.3. ສືບສວນ-ສອບສວນ ແລະ ດໍາເນີນຄະດີກັບບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ລະເມີດຂໍ້ຕົກລົງສະບັບນີ້.

3.4 ສະຫຼຸບ ແລະ ລາຍງານຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ ໃຫ້ຂັ້ນເທິງຢ່າງເປັນປົກກະຕິ.

4. ພະແນກສຶກສາທິການ ແລະ ກິລາ ແຂວງສາລະວັນ ຮັບຜິດຊອບ ດັ່ງນີ້:

ຮັບຜິດຊອບ ເຜີຍແຜ່ນິຕິກໍາຕ່າງໆກ່ຽວກັບ ການຄຸ້ມຄອງການນໍາໃຊ້ອິນເຕີເນັດ, ຄວາມຮູ້ດ້ານອິນເຕີເນັດໃຫ້ແກ່ນັກຮຽນ, ນັກສຶກສາ ເພື່ອໃຫ້ໄດ້ນໍາໃຊ້ອິນເຕີເນັດໄປໃນທາງທີ່ເໝາະສົມ ຫຼີກເວັ້ນຈາກຜົນກະທົບທາງລົບຂອງການນໍາໃຊ້ຂໍ້ມູນຂ່າວສານຜ່ານອິນເຕີເນັດ.

**ມາດຕາ 17 ຄວາມຮັບຜິດຊອບຂອງພາກສ່ວນອື່ນໆ**

ບັນດາພະແນກການ, ກົມກອງອ້ອມຂ້າງແຂວງ, ອົງການປົກຄອງເມືອງ ຮັບຜິດຊອບຄຸ້ມຄອງຂໍ້ມູນຂ່າວສານຜ່ານອິນເຕີເນັດທີ່ກ່ຽວຂ້ອງກັບອົງການຂອງຕົນ ພ້ອມທັງປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ເພື່ອຊີ້ແຈງ, ຕ້ານ ແລະ ສະກັດກັ້ນ ການເຜີຍແຜ່ຂໍ້ມູນຂ່າວສານຜ່ານອິນເຕີເນັດ ທີ່ລະເມີດກັບພາລະບົດບາດ ຂະແໜງການຕົນ ແລະ ຂໍ້ຕົກລົງສະບັບນີ້.

## ໝວດທີ 6

## ອົງການຄຸ້ມຄອງ ແລະ ກວດກາ

**ມາດຕາ 18 ອົງການຄຸ້ມຄອງ**

ອົງການປົກຄອງແຂວງ ຄຸ້ມຄອງຢ່າງລວມສູນເປັນເອກະພາບພາຍໃນຂອບເຂດທົ່ວແຂວງ, ໂດຍມອບໃຫ້ພະແນກເຕັກໂນໂລຊີ ແລະ ການສື່ສານແຂວງສາລະວັນ ເປັນເຈົ້າການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ.

ອົງການຄຸ້ມຄອງປະກອບດ້ວຍ:

1. ພະແນກເຕັກໂນໂລຊີ ແລະ ການສື່ສານແຂວງ.



สแกนด้วย CamScanner

2. ຫ້ອງການເຕັກໂນໂລຊີ ແລະ ການສື່ສານເມືອງ.

**ມາດຕາ 19 ສິດ ແລະ ໜ້າທີ່ຂອງ ພະແນກເຕັກໂນໂລຊີ ແລະ ການສື່ສານ**

1. ຊ່ວຍອົງການປົກຄອງແຂວງ ຄົ້ນຄວ້າ ແລະ ປະກອບຄໍາເຫັນຕໍ່ຮ່າງນະໂຍບາຍ, ວິໄສທັດ, ແຜນຍຸດທະສາດ, ນິຕິກໍາ, ແຜນດໍາເນີນງານ ແລະ ແຜນພັດທະນາວຽກງານອິນເຕີເນັດ, ພື້ນຖານໂຄງລ່າງຂໍ້ມູນຂ່າວສານລະບົບສາຍສົ່ງໂທລະຄົມມະນາຄົມ, ລະບຽບການເຄື່ອນໄຫວ ແລະ ມາດຕະການແກ້ໄຂຕ່າງໆ ຕາມການມອບໝາຍ ເພື່ອສະເໜີຕໍ່ອົງການປົກຄອງແຂວງ ພິຈາລະນາອະນຸມັດ;
2. ຊ່ວຍອົງການປົກຄອງແຂວງ ຄົ້ນຄວ້າຫັນເອົານະໂຍບາຍ, ຍຸດທະສາດ, ແຜນງານ ແລະ ນະຕິຕິກລົງຂອງລັດ ຖະບານ ກ່ຽວກັບວຽກງານຂໍ້ມູນຂ່າວສານຜ່ານອິນເຕີເນັດ ມາເປັນແຜນຍຸດທະສາດ, ແຜນງານ ແລະ ໂຄງ ການລະອຽດຂອງຕົນ ພ້ອມທັງຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີ ແລະ ປະກົດຜົນເປັນຈິງ;
3. ຊີ້ນໍາຫ້ອງການເຕັກໂນໂລຊີ ແລະການສື່ສານເມືອງ ກ່ຽວກັບວຽກງານຂໍ້ມູນຂ່າວສານຜ່ານອິນເຕີເນັດ ເພື່ອກໍານົດມາດຕະຖານ, ເງື່ອນໄຂ, ການບໍລິການ ແລະ ວຽກງານອື່ນໆ ທີ່ກ່ຽວຂ້ອງກັບລະບົບອິນເຕີເນັດໃຫ້ເປັນຮູບປະທໍາ ແລະ ມີປະສິດຕິພາບ;
4. ປະສານສົມທົບກັບພາກສ່ວນອື່ນ ທີ່ກ່ຽວຂ້ອງ ຄົ້ນຄວ້າສ້າງ ຫຼື ປັບປຸງກົນໄກ, ນະໂຍບາຍ ຫຼື ຈັດຕັ້ງປະຕິ ບັດນິຕິກໍາທີ່ກ່ຽວຂ້ອງ ທີ່ເຫັນວ່າບໍ່ສອດຄ່ອງກັບສະພາບຄວາມເປັນຈິງ ຂອງແຂວງ;
5. ອອກຂໍ້ຕົກລົງ, ຄໍາແນະນໍາ, ແຈ້ງການ ແລະ ລະບຽບການກ່ຽວກັບວຽກງານຂໍ້ມູນຂ່າວສານຜ່ານອິນເຕີເນັດ ລວມທັງວຽກງານຕອບຕ້ານ ໃນກໍລະນີ ມີການແຊກແຊງຈາກພາຍນອກ ແລະ ພາຍໃນ ຜ່ານລະບົບອິນເຕີເນັດ;
6. ສະເໜີແຕ່ງຕັ້ງ, ຍົບເລີກອະນຸກໍາມະການວິຊາການຊ່ວຍວຽກສະເພາະດ້ານ ເມື່ອເຫັນວ່າມີຄວາມຈໍາເປັນ ພ້ອມທັງກໍານົດພາລະບົດບາດ, ໜ້າທີ່, ຂອບເຂດສິດ ແລະ ຄວາມຮັບຜິດຊອບຂອງອະນຸກໍາມະການໃຫ້ຈະແຈ້ງຮັດກຸມ;
7. ຄົ້ນຄວ້າບັນດາເປົ້າໝາຍນໍາໃຊ້ຂໍ້ມູນຂ່າວສານ ຜ່ານລະບົບອິນເຕີເນັດ ທີ່ລະເມີດຕໍ່ກົດໝາຍ, ລະບຽບການແນວທາງນະໂຍບາຍຂອງພັກ ເພື່ອຊີ້ນໍາ ຫຼື ນໍາສະເໜີຕໍ່ພາກສ່ວນທີ່ກ່ຽວຂ້ອງ ຕອບໂຕ້, ຕອບຕ້ານ ແລະ ແກ້ໄຂຕາມຄວາມເໝາະສົມ;
8. ຄຸ້ມຄອງ, ກວດກາ, ຕິດຕາມ, ສະຫຼຸບລາຍງານ ແລະ ຖອດຖອນບົດຮຽນໃນການຈັດຕັ້ງປະຕິບັດບັນດານິ ຕິກໍາ, ແຜນງານ ແນໃສ່ສົ່ງເສີມ ແລະ ພັດທະນາວຽກງານຂໍ້ມູນຂ່າວສານຜ່ານອິນເຕີເນັດ ເພື່ອສະເໜີອົງການປົກຄອງແຂວງພິຈາລະນາ ແລະ ລາຍງານອົງການຈັດຕັ້ງທີ່ກ່ຽວຂ້ອງຕາມລະບຽບການ;
9. ສະເໜີຍ້ອງຍໍ ແລະ ປະຕິບັດນະໂຍບາຍທີ່ເໝາະສົມຕໍ່ການຈັດຕັ້ງ, ບຸກຄົນ ຫຼື ນິຕິບຸກຄົນ ທີ່ມີຜົນງານປະ ກອບສ່ວນເຂົ້າໃນການຄຸ້ມຄອງ ແລະ ພັດທະນາວຽກງານຂໍ້ມູນຂ່າວສານຜ່ານອິນເຕີເນັດ;
10. ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ, ລະບຽບການ ແລະ ຕາມການມອບໝາຍ ຂອງຄະນະກໍາມະການຄຸ້ມຄອງຂໍ້ມູນຂ່າວສານຜ່ານອິນເຕີເນັດ;

**ມາດຕາ 20 ສິດ ແລະ ໜ້າທີ່ຂອງ ຫ້ອງການເຕັກໂນໂລຊີ ແລະ ການສື່ສານເມືອງ**

1. ເປັນເສນາທິການຊ່ວຍຄະນະກໍາມະການຄຸ້ມຄອງຂໍ້ມູນຂ່າວສານຜ່ານອິນເຕີເນັດ ຢູ່ແຂວງສາລະວັນ ໃນການຄົ້ນຄວ້າ ແລະ ປະສານງານກັບບັນດາຂະແໜງການອ້ອມຂ້າງເມືອງ, ອົງການຈັດຕັ້ງຕ່າງໆກ່ຽວກັບວຽກງານອິນເຕີເນັດ ແລະ ເຕັກໂນໂລຊີການສື່ສານ ຂໍ້ມູນຂ່າວສານຕາມພາລະບົດບາດ ແລະ ໜ້າທີ່ ທີ່ໄດ້ຮັບມອບໝາຍ;
2. ຊ່ວຍອົງການປົກຄອງເມືອງ ຄົ້ນຄວ້າຫັນເອົານະໂຍບາຍ, ຍຸດທະສາດ, ແຜນພັດທະນາວຽກງານອິນເຕີເນັດພື້ນຖານໂຄງລ່າງຂໍ້ມູນຂ່າວສານ, ລະບົບສາຍສົ່ງໂທລະຄົມມະນາຄົມ, ລະບຽບການເຄື່ອນໄຫວ ແລະ ມາດຕະການແກ້ໄຂຕ່າງໆ ຕາມການມອບໝາຍ ເພື່ອສະເໜີຕໍ່ອົງການປົກຄອງພິຈາລະນາອະນຸມັດ;



สแกนด้วย CamScanner

3. ຕິດຕາມ, ກວດກາຜູ້ໃຫ້ບໍລິການອິນເຕີເນັດ, ຮ້ານອິນເຕີເນັດຄາເຟ ແລະ ປະກົດການຫຍໍ້ທໍ້ຕ່າງໆທີ່ເກີດຂຶ້ນພາຍໃນເມືອງ ກ່ຽວກັບວຽກງານຂໍ້ມູນຂ່າວສານຜ່ານອິນເຕີເນັດ ພ້ອມທັງໃຫ້ການຮ່ວມມືກັບເຈົ້າໜ້າທີ່ ທີ່ກ່ຽວຂ້ອງໃນການຕິດຕາມ, ຊອກຄົ້ນຜູ້ເຜີຍແຜ່ຂໍ້ມູນຂ່າວສານ ທີ່ເປັນການລະເມີດຕໍ່ລະບຽບກົດໝາຍ;
4. ສະຫຼຸບລາຍງານຜົນຂອງການຈັດຕັ້ງປະຕິບັດວຽກງານ ຄຸ້ມຄອງຂໍ້ມູນຂ່າວສານຜ່ານອິນເຕີເນັດ ແລະ ຖອດ ຖອນບົດຮຽນໃນແຕ່ລະໄລຍະໃຫ້ອົງການປົກຄອງເມືອງ ແລະ ຄະນະກຳມະການຄຸ້ມຄອງຂໍ້ມູນຂ່າວສານ ຜ່ານອິນເຕີເນັດ ຢູ່ແຂວງສາລະວັນ;
5. ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງອົງການປົກຄອງເມືອງ, ຄະນະກຳມະການຄຸ້ມຄອງຂໍ້ມູນຂ່າວ ສານຜ່ານອິນເຕີເນັດ ຢູ່ແຂວງສາລະວັນ;

**ມາດຕາ 21 ອົງການກວດກາ**

1. ອົງການກວດກາພາຍໃນ.

ອົງການກວດກາພາຍໃນ ເຊິ່ງແມ່ນອົງການດຽວກັນກັບ ອົງການຄຸ້ມຄອງຕາມທີ່ໄດ້ກຳນົດໄວ້ໃນມາດຕາ 18 ຂອງຂໍ້ຕົກລົງສະບັບນີ້.

2. ອົງການກວດກາພາຍນອກ.

ອົງການກວດກາພາຍນອກ ປະກອບມີ: ສະພາປະຊາຊົນແຂວງ, ອົງການກວດກາລັດແຂວງ, ອົງການໄອຍະການປະຊາຊົນແຂວງ;

**ມາດຕາ 22 ຫຼັກການກວດກາ**

ການກວດກາ ວຽກງານຄຸ້ມຄອງຂໍ້ມູນຂ່າວສານຜ່ານອິນເຕີເນັດ ຕ້ອງປະຕິບັດຕາມຫຼັກການ ດັ່ງນີ້:

1. ປະຕິບັດຕາມກົດໝາຍ, ລະບຽບຕ່າງໆຢ່າງເຂັ້ມງວດ;
2. ມີປະຊາທິປະໄຕ, ພາວະວິໄສ ແລະ ມີຄວາມໂປ່ງໃສ;
3. ຮັບປະກັນຄວາມຊັດເຈນ, ຍຸຕິທຳ, ທັນເວລາ ແລະ ເປີດເຜີຍຕາມລະບຽບການ;
4. ມີສ່ວນຮ່ວມຂອງປະຊາຊົນ ແລະ ການຈັດຕັ້ງທຸກຂັ້ນ ລວມທັງສື່ມວນຊົນ;
5. ບໍ່ສ້າງຄວາມຫຍຸ້ງຍາກທີ່ບໍ່ຈຳເປັນໃຫ້ແກ່ການເຄື່ອນໄຫວວຽກງານຂອງການຈັດຕັ້ງ ແລະ ບຸກຄົນທີ່ຖືກກວດກາ;

**ມາດຕາ 23 ເນື້ອໃນຂອງການກວດກາ**

ການກວດກາວຽກງານ ຄຸ້ມຄອງຂໍ້ມູນຂ່າວສານຜ່ານອິນເຕີເນັດ ມີເນື້ອໃນ ດັ່ງນີ້:

1. ການປະຕິບັດແຜນຍຸດທະສາດ, ນະໂຍບາຍ ແລະ ກົດໝາຍ ກ່ຽວກັບວຽກງານຄຸ້ມຄອງຂໍ້ມູນຂ່າວສານຜ່ານອິນເຕີເນັດ;
2. ການຈັດຕັ້ງ ແລະ ການເຄື່ອນໄຫວຂອງຂະແໜງການເຕັກໂນໂລຊີ ແລະ ການສື່ສານ;
3. ຄວາມຮັບຜິດຊອບ, ການປະພຶດ ແລະ ແບບແຜນວິທີເຮັດວຽກຂອງພະນັກງານຂະແໜງການເຕັກໂນໂລຊີ ແລະ ການສື່ສານ;
4. ການເຄື່ອນໄຫວຂອງຜູ້ໃຫ້ບໍລິການຂໍ້ມູນຂ່າວສານຜ່ານອິນເຕີເນັດ;
5. ການເຄື່ອນໄຫວຂອງຜູ້ໃຊ້ບໍລິການຂໍ້ມູນຂ່າວສານຜ່ານອິນເຕີເນັດ;

**ມາດຕາ 24 ຮູບການກວດກາ**

1. ກວດກາ ປົກກະຕິ ແມ່ນການກວດກາຕາມແຜນການຢ່າງເປັນປະຈຳ ແລະ ມີກຳນົດເວລາທີ່ແນ່ນອນ;
2. ກວດກາໂດຍແຈ້ງກ່ອນລ່ວງໜ້າ ແມ່ນການກວດສອບນອກແຜນ ໂດຍມີການແຈ້ງໃຫ້ຜູ້ຖືກກວດກາຊາບລ່ວງໜ້າ;
3. ກວດກາແບບກະທັນຫັນ ແມ່ນການກວດກາຮີບດ່ວນໂດຍບໍ່ມີການແຈ້ງໃຫ້ຜູ້ຖືກກວດກາຊາບລ່ວງໜ້າ;



สแกนด้วย CamScanner

## ໝວດທີ 7
## ຂໍ້ຫ້າມ

**ມາດຕາ 25 ຂໍ້ຫ້າມ ທົ່ວໄປ**

1. ດໍາເນີນທຸລະກິດ ກ່ຽວກັບເຕັກໂນໂລຊີການສື່ສານ ຂໍ້ມູນຂ່າວສານຜ່ານອິນເຕີເນັດ ໂດຍບໍ່ໄດ້ຮັບອະນຸຍາດ;

2. ຂາຍ, ໂອນ, ໃຫ້ເຊົ່າ ຫຼື ໃຫ້ຢືມ ໃບອະນຸຍາດດໍາເນີນທຸລະກິດກ່ຽວກັບເຕັກໂນໂລຊີການສື່ສານ ຂໍ້ມູນຂ່າວ ສານຜ່ານອິນເຕີເນັດ;

3. ນໍາເຂົ້າອຸປະກອນເຕັກໂນໂລຊີການສື່ສານ ຂໍ້ມູນຂ່າວສານ ຫຼື ອຸປະກອນເອເລັກໂຕຣນິກທີ່ກ່ຽວຂ້ອງ ໂດຍບໍ່ໄດ້ຮັບອະນຸຍາດ;

4. ນໍາເຂົ້າ ຂີ້ເຫຍື່ອເອເລັກໂຕຣນິກ ຫຼື ນໍາເຂົ້າອຸປະກອນເຕັກໂນໂລຊີການສື່ສານ ຂໍ້ມູນຂ່າວສານທີ່ບໍ່ໄດ້ມາດ ຕະຖານ;

5. ເຂົ້າຫາ, ລວບລວມ, ນໍາໃຊ້, ເປີດເຜີຍ ຫຼື ເຜີຍແຜ່ຂໍ້ມູນຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງໂດຍບໍ່ ໄດ້ຮັບອະນຸຍາດ;

6. ສະໜອງ, ນໍາໃຊ້, ດັດແປງ, ທໍາລາຍ ຫຼື ເປີດເຜີຍຂໍ້ມູນສ່ວນບຸກຄົນທີ່ຕົນໃຫ້ບໍລິການໂດຍບໍ່ໄດ້ຮັບອະນຸຍາດ;

7. ສ້າງ, ຮັບ ແລະ ເຜີຍແຜ່ຂໍ້ມູນ ຂ່າວສານ ທີ່ມີລັກສະນະ ລາມົກອະນາຈານ, ບິດເບືອນ, ສົ່ງເສີມການກໍ່ ການຮ້າຍ ຫຼື ຕໍ່ຕ້ານລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ທີ່ຕົນໄດ້ຮູ້;

8. ຜະລິດ, ປະກອບ, ຈໍາໜ່າຍ, ນໍາເຂົ້າ, ສົ່ງອອກ ຫຼື ໃຫ້ບໍລິການສ້ອມແປງອຸປະກອນເຕັກໂນໂລຊີການສື່ ສານ ຂໍ້ມູນຂ່າວສານ ຫຼື ອຸປະກອນເອເລັກໂຕຣນິກທີ່ກ່ຽວຂ້ອງ ໂດຍບໍ່ໄດ້ມາດຕະຖານ;

9. ນໍາໃຊ້ເຕັກໂນໂລຊີການສື່ສານ ຂໍ້ມູນຂ່າວສານຜ່ານອິນເຕີເນັດ ເພື່ອໂຄສະນາຊວນເຊື່ອທີ່ຂັດກັບກົດໝາຍ ແລະ ລະບຽບການ;

10. ທໍາລາຍ ອຸປະກອນເຕັກໂນໂລຊີການສື່ສານ ຂໍ້ມູນຂ່າວສານ ເປັນຕົ້ນ ໂຄງລ່າງພື້ນຖານ, ເຄືອຂ່າຍເຕັກ ໂນໂລຊີການສື່ສານ ຂໍ້ມູນຂ່າວສານ;

11. ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 26 ຂໍ້ຫ້າມ ສໍາລັບພະນັກງານ**

ຫ້າມພະນັກງານຂະແໜງການເຕັກໂນໂລຊີ ແລະ ການສື່ສານ ມີພຶດຕິກໍາ ດັ່ງນີ້:

1. ເຂົ້າຫາ, ທໍາລາຍ, ດັດແປງ, ປອມແປງ, ສະໜອງ, ນໍາໃຊ້ ຫຼື ເຜີຍແຜ່ຂໍ້ມູນຂ່າວສານຂອງລັດ, ບຸກຄົນ, ນິ ຕິບຸກຄົນ ຫຼື ການຈັດຕັ້ງໂດຍບໍ່ໄດ້ຮັບອະນຸຍາດ;

2. ສວຍໃຊ້ອໍານາດ, ໜ້າທີ່, ຕໍາແໜ່ງ ຂົ່ມຂູ່ຜູ້ອື່ນ, ສົມຮູ້ຮ່ວມຄິດເພື່ອຫາຜົນປະໂຫຍດ ຫຼື ກໍ່ໃຫ້ເກີດ ຄວາມ ເສຍຫາຍແກ່ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງຂອງລັດ, ລວມໝູ່ ຫຼື ສັງຄົມ;

3. ເປີດເຜີຍຂໍ້ມູນ ຫຼື ເອກະສານລັບຂອງລັດ ຫຼື ເອກະສານລັບທາງລັດຖະການ;

4. ທວງເອົາ, ຂໍເອົາ, ຮັບສິນບົນ ຫຼື ຜົນປະໂຫຍດອື່ນ, ກົດໜ່ວງຖ່ວງດຶງການພິຈາລະນາເອກະສານຕ່າງໆ;

5. ກົດໜ່ວງຖ່ວງດຶງ ຜະລິດຕະພັນເຕັກໂນໂລຊີການສື່ສານ ຂໍ້ມູນຂ່າວສານ ທີ່ໄດ້ຮັບອະນຸຍາດ ຫຼື ຢັ້ງຢືນແລ້ວ;

6. ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

## ໝວດທີ 8
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 27 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຈະໄດ້ຮັບ



สแกนด้วย CamScanner

ການບ້ອງບໍ່ ຫຼື ນະໂຍບາຍ ຕາມລະບຽບການ.

**ມາດຕາ 28 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກກ່າວເຕືອນ, ສຶກສາອົບຮົມ ລົງວິໄນ, ປັບໄໝໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ຖືກລົງໂທດທາງອາຍາແລ້ວແຕ່ກໍລະນີໜັກ ຫຼື ເບົາ, ອີງຕາມກົດໝາຍວ່າດ້ວຍການຕ້ານ ແລະ ສະກັດກັ້ນ ອາຊະຍາກຳທາງລະບົບຄອມພິວເຕີ ມາດຕາ 59, ມາດຕາ 60, ມາດຕາ 61 ແລະ ມາດຕາ 62, ສະບັບເລກທີ 61/ສພຊ, ລົງວັນທີ 15 ກໍລະກົດ 2015.

## ໝວດທີ 9
## ບົດບັນຍັດສຸດທ້າຍ

**ມາດຕາ 29 ງົບປະມານ**

ຄະນະກຳມະການຄຸ້ມຄອງຂໍ້ມູນຂ່າວສານຜ່ານອິນເຕີເນັດແຂວງສາລະວັນ ມີງົບປະມານຂອງຕົນເອງເພື່ອຮັບໃຊ້ເຂົ້າໃນການເຄື່ອນໄຫວວຽກງານທາງລັດຖະການ ໂດຍປະຕິບັດຕາມລະບຽບການຂອງລັດ.

ງົບປະມານຮັບໃຊ້ສຳລັບການເຄື່ອນໄຫວ ຂອງຄະນະກຳມະການຄຸ້ມຄອງຂໍ້ມູນຂ່າວສານຜ່ານອິນເຕີເນັດແຂວງສາລະວັນ ແມ່ນບ້ວງໜຶ່ງໃນງົບປະມານປະຈຳປີ ຂອງພະແນກເຕັກໂນໂລຊີ ແລະ ການສື່ສານ ແຂວງສາລະວັນ ໂດຍແມ່ນພະແນກການເງິນແຂວງສາລະວັນ ຈັດສັນແບ່ງຮ່ວງງົບປະມານເພີ່ມໃຫ້ຕາມແຜນການເຄື່ອນໄຫວປະຈຳປີ ຂອງຄະນະກຳມະການຄຸ້ມຄອງຂໍ້ມູນຂ່າວສານຜ່ານອິນເຕີເນັດ ຢູ່ແຂວງສາລະວັນ.

**ມາດຕາ 30 ການຈັດຕັ້ງປະຕິບັດ**

ມອບໃຫ້ພະແນກເຕັກໂນໂລຊີ ແລະ ການສື່ສານແຂວງ ສາລະວັນ ເປັນເຈົ້າການປະສານສົມທົບກັບ ພາກສ່ວນທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ມີປະສິດທິຜົນ.

ສຳລັບ ຂັ້ນເມືອງ ແມ່ນສາມາດແຕ່ງຕັ້ງຄະນະກຳມະການຄຸ້ມຄອງຂໍ້ມູນຂ່າວສານຜ່ານອິນເຕີເນັດ ຂັ້ນຂອງຕົນ, ໂດຍມອບຄວາມຮັບຜິດຊອບໃຫ້ ຫ້ອງການເຕັກໂນໂລຊີ ແລະ ການສື່ສານເມືອງ ທີ່ເປັນຜູ້ປະສານງານຂັ້ນເມືອງ ປະຕິບັດໜ້າທີ່ ຈັດຕັ້ງຜັນຂະຫຍາຍຕາມພາລະບົດບາດ.

ບັນດາພະແນກການ, ກົມກອງອ້ອມຂ້າງແຂວງ, ອົງການປົກຄອງເມືອງ, ບຸກຄົນ, ນິຕິບຸກຄົນ ທັງພາຍໃນ ແລະ ຕ່າງປະເທດ ທີ່ໃຫ້ບໍລິການ ແລະ ໃຊ້ບໍລິການອິນເຕີເນັດຢູ່ພາຍໃນແຂວງສາລະວັນ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດ ຕາມຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 31 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ເຈົ້າແຂວງ**

[ສາລະວັນ stamp and signature]

ປອ. ດາວວົງ ພອນແກ້ວ

\+ ບ່ອນນຳສົ່ງ:

1. ພະແນກຍຸຕິທຳແຂວງ 01 ສະບັບ;
2. ຄະນະຮັບຜິດຊອບສ້າງຮ່າງນິຕິກຳໃຕ້ກົດໝາຍ ລະ 01 ສະບັບ;
3. ພະແນກເຕັກໂນໂລຊີ ແລະ ການສື່ສານ 01 ສະບັບ;
4. ເກັບຮັກສາໄວ້ 01 ສະບັບ.



สแกนด้วย CamScanner